# ປຽບທຽບຜົນການຮຽນ ແລະ ຄວາມເພິ່ງພໍໃຈຂອງນັກຮຽນໃນການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ເທັກນິກ Think-Pair-Share ແລະ ການໃຊ້ຄຳຖາມ

*ສາຍພອນ ພັນທະວົງ*, ບຸນແສງ ບຸນທອງ, ສຸລະໄຊ ພິພັດຜົນ*

*ພາກວິຊາສ້າງຄູພາສາອັງກິດ ຝຣັ່ງ ແລະ ໄອຊີທີ, ວິທະຍາໄລຄູຫຼວງພະບາງ*

---

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງ 1) ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມການໃຊ້ຄຳຖາມ ແລະ 2) ເພື່ອສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບທັກສະການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ນັກຮຽນມັດທະຍົມສຶກສາຊັ້ນ ມ.4 ໂຮງຮຽນມັດທະຍົມສົມບູນສາທິດ ພາກຮຽນທີ 1 ສົກຮຽນ 2024-2025 ຈຳນວນ 21 ຄົນ, ຍິງ 13 ຄົນ ໂດຍການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ ແຜນການຈັດການຮຽນຮູ້ແບບ think-pair-share ຮ່ວມກັບການໃຊ້ຄຳຖາມ, ແບບທົດສອບວັດຜົນສຳເລັດທາງການຮຽນຂອງນັກຮຽນ, ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບສົມມຸດຕິຖານດ້ວຍ dependent Samples t-test . ຜົນການຄົ້ນຄວ້າພົບວ່າ ຜົນການຮຽນອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມຂອງນັກຮຽນກ່ອນຮຽນແມ່ນມີ (Mean= 9.04 ແລະ SD = 1.35) ແລະ ຫຼັງຮຽນແມ່ນມີ (Mean= 24.66 ແລະ SD = 2.70) ເຊິ່ງຫຼັງຮຽນແມ່ນສູງກວ່າກ່ອນຮຽນດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05. ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ ໂດຍມີ ( $\overline{X}$ = 4.62 ແລະ SD= 0,03) ເຊິ່ງສູງກວ່າສົມມຸດຖານທີ່ວາງໄວ້.

***ຄຳສັບສຳຄັນ:*** *ຜົນການຮຽນກ່ອນ ແລະ ຫຼັງ, ຄວາມເພິ່ງພໍໃຈ, think-pair-share, ພາສາຝຣັ່ງ*

---

**ຕິດຕໍ່ພົວພັນ: ນາງ ສາຍພອນ ພັນທະວົງ, ໂທ: 020 77770065; ອີເມວ: sayphonephanthavong@gmail.com*

# A Comparison of Students' Learning Outcomes and Satisfaction in French Reading Comprehension Using the Think-Pair-Share Technique with Questions

*Sayphone PHANTHAVONG*, Bounseng BOUNTHONG, Soulasay PHIPHATPHON*

*Faculty of Education, Department of Teacher Training in English, French and ICT*
*Luang Prabang Teacher Training College*

## Abstract

The objectives of this study were 1) to compare students' learning outcomes before and after French reading instruction using the think-pair-share technique with questions, and 2) to assess students' satisfaction with their French reading comprehension skills when taught through the think-pair-share technique with questions. The sample group comprised 21 Grade 4 students (including 13 females) from the Demonstration High School during the 2024–2025 academic year. The research instruments included: a think-pair-share learning management plan with questions, a test measuring students' learning achievement, and a questionnaire evaluating students' satisfaction with the development of their French reading comprehension skills through the think-pair-share teaching method with questions. The statistical methods employed for data analysis were mean, standard deviation, and dependent samples t-test. The findings revealed that students' French reading comprehension outcomes improved significantly after instruction using the think-pair-share method with questions. The mean score before instruction was 9.04 (SD = 1.35), while the mean score after instruction was 24.66 (SD = 2.70). Post-test results were significantly higher than pre-test results at the 0.05 level, confirming the research hypothesis. Students reported the highest level of satisfaction with the development of their French reading comprehension skills through the think-pair-share technique with questions, with a mean score of 4.62 (SD = 0.03), exceeding the expected assumption.

***Key words:*** *Pre-and Post-Learning outcome, Satisfaction, French, Think-pair-share.*

**Correspondence: Sayphone PHANTHAVONG; Tel: 020 77770065; Email: sayphonephanthavong@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ໃນຍຸກປະຈຸບັນບັນດາປະເທດຕ່າງໆໄດ້ຫັນມາຮ່ວມມືກັນທາງດ້ານເສດຖະກິດ, ສັງຄົມ ແລະ ການເມືອງໃນນັ້ນ ປະເທດລາວເຮົາກໍ່ເຊັ່ນກັນໄດ້ຂະຫຍາຍການຮ່ວມມືທັງພາກພື້ນ ແລະ ສາກົນ. ສະນັ້ນ, ການນຳໃຊ້ພາສາຂອງແຕ່ລະປະເທດກໍ່ຈະມີຄວາມແຕກຕ່າງກັນ ເຊິ່ງຜູ້ຄົນໃນໂລກນີ້ຕ້ອງໄດ້ຮຽນຮູ້ພາສາ ແລະ ວັດທະນາທຳຂອງກັນ ແລະ ກັນ ເພື່ອເຮັດໃຫ້ສາມາດສື່ສານສົນທະນາກັນໃຫ້ມີຄວາມເຂົ້າໃຈທາງດ້ານພາສາປາກເວົ້າ, ຂີດຂຽນ, ການຟັງ ແລະ ການອ່ານ (Sisombath, 2021). ພາສາຝຣັ່ງເປັນພາສາໜຶ່ງທີ່ຖືກນຳໃຊ້ເປັນພາສາກາງໃນການສື່ສານສົນທະນາຂີດຂຽນຂອງຫຼາຍໆປະເທດໃນທົ່ວໂລກເນື່ອງຈາກປະຫັວດສາດ ອິດທິພົນທາງວັດທະນະທຳ ແລະ ບົດບາດທາງດ້ານການເມືອງສາກົນຂອງປະເທດຝຣັ່ງ, ພາສາຝຣັ່ງໄດ້ເປັນພາສາທາງການຂອງອົງການນາໆຊາດ, ນາໃຊ້ໃນທຸກທະວີບ ແລະ ເປັນພາຫະນະທີ່ຈຳເປັນສຳລັບການສື່ສານ, ການສຶກສາ ແລະ ການຄ້າ. ພາສາຝຣັ່ງມີປະມານ 321 ລ້ານຄົນທີ່ເວົ້າທົ່ວໂລກ, ເຮັດໃຫ້ເປັນພາສາໜຶ່ງທີ່ໃຊ້ເວົ້າຢ່າງກວ້າງຂວາງທີ່ສຸດ ເປັນພາສາທາງການ ແລະ ພາສາທາງການຮ່ວມມືຂອງ 29 ປະເທດສ່ວນໃຫຍ່ຢູ່ອາຟຼິກກາ, ເອີລົບ ແລະ ອາເມລິກາເໜືອ. ນອກຈາກນັ້ນ, ມັນຍັງເປັນໜຶ່ງໃນ 6 ພາສາທາງການຂອງອົງການສະຫະປະຊາຊາດ ແລະ ເປັນພາສາທາງລັດຖະການຂອງສະຖາບັນຕ່າງໆ ເຊັ່ນ: ສະຫະພາບເອີລົບ ແລະ ສະຫະພາບອາຟຼິກກາ. ເປັນເຄື່ອງມືເຜີຍແຜ່ວັດທະນະທຳ ແລະ ການສຶກສາຂອງມະຫາໄລທີ່ນຳໃຊ້ພາສາຝຣັ່ງ, ເປັນບ່ອນແບ່ງປັນວັດທະນະທຳ ແລະ ສະຕິປັນຍາຜ່ານທາງໜັງສື, ດົນຕີ, ພາບພະຍົນ ແລະ ປັດຊະຍາ. ພາສາຝຣັ່ງຍັງເປັນພາສາທີ່ຖ່າຍທອດມະນຸດສະທຳ(International Organization of La Francophonie, 2022).

ການອ່ານເປັນທັກສະທີ່ສຳຄັນໃນການພັດທະນາຄວາມຮູ້, ຄວາມສຳເລັດທາງການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ. ເພີ່ມການຮູ້ຄຳສັບຫຼາຍຂຶ້ນມີຄວາມເຂົ້າໃຈຫຼາຍຂຶ້ນ, ຈະມີຄວາມຄິດວິຈານ ແລະ ຈິນຕະນາການຫຼາຍຂຶ້ນນອກຈາກນັ້ນການອ່ານແມ່ນການສົ່ງເສີມໃຫ້ຄົນທີ່ມີທັດສະນະຄະຕິ ແລະ ວັດທະນະທຳທີ່ແຕກຕ່າງກັນເກີດມີຄວາມເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ. ການອ່ານເປັນການພັດທະນາຄວາມຮູ້ຊ່ວຍໃຫ້ມີຄວາມຈື່ຈຳການເອົາໃຈໃສ່ ແລະ ມີການວິເຄາະ, ມີທັກສະການໃຊ້ພາສາຂຶ້ນ ໂດຍຂະຫຍາຍຄຳສັບ ແລະ ໃຊ້ພາສາໃຫ້ຖືກຕ້ອງຕາມຫຼັກການ. ການອ່ານຊ່ວຍໃຫ້ປະສົບຜົນສຳເລັດທາງການສຶກສາ ແລະ ຈຳເປັນຢ່າງຫຍິ່ງສຳຫຼັບທຸກໆລາຍວິຊາ, ການອ່ານຊ່ວຍໃຫ້ຄົນອາລົມດີ ແລະ ມີສັງຄົມທີ່ມີຄວາມເຂົ້າໃຈກັນ ແລະ ເຮັດໃຫ້ເກີດມີສະຕິປັນຍາທາງອາລົມ, ການອ່ານຊ່ວຍໃຫ້ຄົນເຮົາມີຄວາມສຸກ ແລະ ຮູ້ສຶກຜ່ອນຄາຍໃນທຸກໆມື້. ການອ່ານບໍ່ພຽງແຕ່ເປັນວິຊາການເທົ່ານັ້ນແຕ່ມັນເປັນແສງສະຫວ່າງທີ່ນຳໄປສູ່ຄວາມຮູ້, ເກີດຄວາມຄິດສ້າງສັນ ແລະ ການ

ເຕີບໃຫຍ່ສ່ວນບຸກຄົນ. ດັ່ງນັ້ນ, ການສົ່ງເສີມການອ່ານເລີ່ມແຕ່ອາຍຸຍັງນ້ອຍຈະຊ່ວຍພັດທະນາຜູ້ຮຽນໄດ້ຕະຫຼອດຊີວິດ (Krashen, 2004). ການອ່ານເປັນສິ່ງທີ່ມີຄວາມສຳຄັນ ແລະ ຖືເປັນຄວາມຈຳເປັນຂັ້ນພື້ນຖານທີ່ສຳຄັນຢ່າງຫຍິ່ງທີ່ຈະຊ່ວຍໃຫ້ບຸກຄົນເກີດຄວາມງອກງາມທາງດ້ານສະຕິປັນຍາ, ສາມາດຕິດຕາມການເຄື່ອນໄຫວ, ຄວາມກ້າວໜ້າທັນຕໍ່ເຫດການຕ່າງໆທີ່ມີການປ່ຽນແປງຢູ່ຕະຫຼອດເວລາ, ເພາະການອ່ານເປັນເຄື່ອງມືທີ່ຈະຊ່ວຍໃຫ້ບຸກຄົນມີຄວາມຮູ້ຄວາມສາມາດ, ເຊິ່ງຈະສົ່ງຜົນໃຫ້ບຸກຄົນປະສົບຜົນສຳເລັດໃນການດຳລົງຊີວິດ. ນອກຈາກການອ່ານສາມາດພັດທະນາບຸກຄົນແລ້ວ ຍັງຊ່ວຍພັດທະນາສັງຄົມ ແລະ ປະເທດຊາດອີກດ້ວຍ (Hatsady, 2022).

ການອ່ານເພື່ອຄວາມເຂົ້າໃຈແມ່ນການແປຄວາມໝາຍ ແລະ ວິເຄາະຂໍ້ຄວາມຢ່າງມີເຫດຜົນ, ມີຄວາມເຂົ້າໃຈໃນການອ່ານໄດ້ຫຼາຍແມ່ນເປັນສິ່ງສຳຄັນທີ່ສຸດເພື່ອປະສົບຜົນສຳເລັດທາງການສຶກສາ, ຄວາມສຳເລັດທາງດ້ານວິຊາອາຊີບ ແລະ ເປັນການສື່ສານທີ່ມີປະສິດທິພາບສູງ. ການອ່ານເພື່ອຄວາມເຂົ້າໃຈແມ່ນມີຄວາມສຳຄັນຢ່າງຫຍິ່ງເພາະວ່າມັນຈະຊ່ວຍເພີ່ມທະວີຄວາມຊຳນານຂອງການນຳໃຊ້ຄຳສັບ ແລະ ພາສາ, ການຮອບຮູ້ຂໍ້ຄວາມທີ່ແຕກຕ່າງກັນຈະຊ່ວຍພັດທະນາຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ຄຳສັບ, ພັດທະນາຄວາມຄິດວິຈານ, ຊ່ວຍໃຫ້ມີການວິເຄາະ, ມີການສະຫຼຸບສັງລວມ ແລະ ມີການເອົາມາປະສານຕໍ່ກັນ, ມີການປັບປຸງຮັກສາໄວ້ໃນຄວາມຊົງຈຳຊ່ວຍໃຫ້ມີຄວາມຈື່ຈຳຫຼາຍຂຶ້ນສາມາດສະຫຼຸບຂໍ້ຄວາມໄດ້ເປັນຕົວຊ່ວຍໃນການຮຽນຮູ້ທຸກເລື່ອງ ຊ່ວຍໃຫ້ເຂົ້າໃຈປຶ້ມຕຳລາຄຳແນະນຳຕ່າງໆ ແລະ ອຸປະກອນການຄົ້ນຄວ້າໄດ້ດີ. ສິ່ງທີ່ພົ້ນເດັ່ນຂອງການອ່ານເພື່ອຄວາມເຂົ້າໃຈແມ່ນສົ່ງເສີມການຮຽນຮູ້ ແລະ ການຊອກຮູ້ດ້ວຍຕົນເອງຊ່ວຍໃຫ້ການຮຽນຮູ້ ແລະ ການສື່ສານມີປະສິດທິພາບໃນທຸກດ້ານຂອງຊີວິດ (Duke & Pearson, 2002). ການອ່ານເພື່ອຄວາມເຂົ້າໃຈຄືການຈັບໃຈຄວາມສຳຄັນຈາກເນື້ອເລື່ອງທີ່ອ່ານໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້, ໃນການອ່ານແຕ່ລະຄັ້ງນັ້ນຍ່ອມມີຈຸດປະສົງທີ່ຄວນພິຈາລະນາໃນເບື້ອງຕົ້ນຄືສິ່ງທີ່ອ່ານ, ຈຸດປະສົງໃນການອ່ານ ແລະ ວິທີອ່ານ (Bresson, 1983). ຄວາມເຂົ້າໃຈໃນການອ່ານຄືການອ່ານເພື່ອໃຫ້ໄດ້ຂໍ້ມູນຕາມທີ່ຕ້ອງການຈາກການຂຽນ ເປັນການອ່ານເພື່ອໃຫ້ໄດ້ເນື້ອຄວາມເຊິ່ງອາດເປັນສິ່ງທີ່ເຮັດໃຫ້ຜູ້ອ່ານຮູ້ສຶກມ່ວນຊື່ນໄດ້ແນວຄິດ ຫຼື ເກີດຄວາມຮູ້ສຶກອື່ນຮ່ວມ (Nuttall, 1996).

ວິທີສອນແບບ think-pair-share ເປັຍຸດທະວິທີການສອນທີ່ມີປະຕິກິລິຍາສົ່ງເສີມການຮຽນຮູ້ຂອງນັກຮຽນຢ່າງຫ້າວຫັນ, ການເຮັດວຽກຮ່ວມກັນ ແລະ ການຄົ້ນຄິດວິຈານ, ເປັນວິທີສອນທີ່ຊ່ວຍພັກດັນໃຫ້ນັກຮຽນໄດ້ຄົ້ນຄິດດ້ວຍຕົນເອງ, ແລກປ່ຽນສົນທະນາຄຳຕອບ ຫຼື ຄວາມຄິດຂອງຕົນເອງກັບໝູ່ເພື່ອນ ແລະ ໄດ້ຖ່າຍທອດຄຳຕອບ ຫຼື ຄວາມຄິດຂອງເຂົາເຈົ້າກັບກຸ່ມອື່ນ ພາຍໃນຫ້ອງຮຽນ. ເຊິ່ງວິທີສອນນີ້ໄດ້ເຮັດໃຫ້ນັກຮຽນມີສ່ວນຮ່ວມຫຼາຍຂຶ້ນ, ສົ່ງເສີມໃຫ້ນັກຮຽນທຸກຄົນມີສ່ວນຮ່ວມແທນທີ່ຈະອາໄສນັກຮຽນພຽງສອງ ຫຼື ສາມຄົນ, ເປັນວິທີທີ່ຊ່ວຍພັດທະນາຄວາມຄິດວິຈານເປີດໂອກາດໃຫ້ຜູ້ຮຽນໄດ້ຄົ້ນຄິດຢ່າງເລິກເຊິ່ງ ກ່ອນຈະສະແດງຄຳຕອບ ຫຼື ຄວາມຄິດຂອງເຂົາເຈົ້າຢ່າງຊັດເຈນ, ຊ່ວຍປັບປຸງທັກສະການສື່ສານສົ່ງເສີມການມີສ່ວນຮ່ວມນຳກັນ ແລະ ມີການແບ່ງປັນຄວາມຮູ້, ຊ່ວຍເພີ່ມຄວາມໝັ້ນໃຈເຮັດໃຫ້ນັກຮຽນຮູ້ສຶກສະບາຍໃຈຫຼາຍຂຶ້ນໃນການປະກອບສ່ວນຄຳຕອບຫຼືຄວາມຄິດເຫັນຂອງເຂົາເຈົ້າຫຼັງຈາກທີ່ໄດ້ສົນທະນາໂອ້ລົມກັບໝູ່ເພື່ອນ. ວິທີສອນແບບນີ້ແມ່ນມີປະສິດທິພາບ ແລະ ສາມາດນຳໃຊ້ໄດ້ກັບຫຼາຍວິຊາໂດຍສະເພາະກັບກິດຈະກຳການອ່ານເພື່ອຄວາມເຂົ້າໃຈ ແລະ ການແກ້ໄຂບັນຫາຍ້ອນວ່າມັນຊ່ວຍໃຫ້ນັກຮຽນດຳເນີນການ ແລະ ເກັບຮັກສາຂໍ້ມູນໄດ້ມີປະສິດທິພາບຫຼາຍຂຶ້ນ (Lyman, 1981).

ການໃຊ້ຄຳຖາມຂອງຄູສອນເປັນຍຸດທະວິທີການສອນຂັ້ນພື້ນຖານທີ່ກະຕຸ້ນໃຫ້ນັກຮຽນມີຄວາມຄິດວິຈານ, ເພີ່ມຄວາມເຂົ້າໃຈ ແລະ ສົ່ງເສີມການມີສ່ວນຮ່ວມຢ່າງກະຕືລືລົ້ນໃນຂັ້ນຕອນການຮຽນຮູ້, ຄຳຖາມທີ່ມີໂຄງສ້າງທີ່ດີຈະຊີ້ນຳນັກຮຽນໃນການສ້າງຄວາມຮູ້, ສ້າງຄວາມຜູກພັນ ແລະ ພັດທະນາຄວາມຊຳນານໃນການແກ້ໄຂບັນຫາ ເຊິ່ງເຮັດໃຫ້ມີຜົນດີຫຼາຍຢ່າງຄື: ຄຳຖາມຊ່ວຍສົ່ງເສີມການຄິດວິຈານຄືຄຳຖາມໃນລະດັບສູງ, ການວິເຄາະ, ການສັງລວມ, ການປະເມີນ ຊ່ວຍຊຸກຍູ້ໃຫ້ນັກຮຽນຮູ້ໄດ້ຫຼາຍກວ່າການທ່ອງຈຳ. ຄຳຖາມຊ່ວຍເພີ່ມຄວາມເຂົ້າໃຈໃຫ້ຄວາມຄິດຂອງນັກຮຽນຊັດເຈນ, ອ້າງເຫດຜົນ ແລະ ເຂົ້າໃຈຢ່າງເລິກເຊິ່ງ. ຄຳຖາມຊ່ວຍໃຫ້ນັກຮຽນມີສ່ວນຮ່ວມຢ່າງກະຕືລືລົ້ນ, ຊຸກຍູ້ການມີສ່ວນຮ່ວມ ແລະ ການສົນທະນາຂອງນັກຮຽນ. ຄຳຖາມຊ່ວຍປະເມີນຮູບແບບວັດແທກຄວາມເຂົ້າໃຈຂອງນັກຮຽນ ແລະ ປັບປຸງການສອນໃຫ້ເໝາະສົມ. ຄຳຖາມຊ່ວຍພັດທະນາຄວາມຊຳນານໃນການສື່ສານ, ຊ່ວຍໃຫ້ຜູ້ຮຽນ ຮູ້ວິທີສະແດງຄວາມຄິດເຫັນ, ໃຫ້ຄຳຕອບ ແລະ ມີສ່ວນຮ່ວມໃນການສົນທະນາທີ່ມີຄວາມໝາຍ. ຄຳຖາມຊ່ວຍສົ່ງເສີມຄວາມຢາກຮູ້ຢາກເຫັນຂອງນັກຮຽນ ແລະ ຄົ້ນຄວ້າຄຳຕອບດ້ວຍຕົນເອງ. ປະສິດທິພາບຄຳຖາມຂອງຄູສອນແມ່ນຂຶ້ນກັບປະເພດຂອງຄຳຖາມ, ເວລາລໍຖ້າສຳລັບຄຳຕອບ ແລະ ສະພາບແວດລ້ອມໃນຫ້ອງຮຽນທີ່ສົ່ງເສີມການສົນທະນາຢ່າງເປີດເຜີຍ (Walsh and Sattes, 2017).

ຜ່ານການລົງສັງເກດການຮຽນການສອນພາສາຝຣັ່ງໃນໂຮງຮຽນມັດທະຍົມສາທິດເຫັນວ່າ ນັກຮຽນມີບັນຫາຫຼາຍຢ່າງໃນການຮຽນພາສາຝຣັ່ງ, ຕົ້ນຕໍແມ່ນນັກຮຽນບໍ່ມັກອ່ານ, ບໍ່ມີທັກສະໃນການອ່ານ, ອ່ານແລ້ວບໍ່ເຂົ້າໃຈ, ອ່ານແລ້ວຕອບຄຳຖາມບໍ່ໄດ້ ແລະ ບັນຫາຍ່ອຍອື່ນໆ ເຊິ່ງຜູ້ວິໄຈສາມາດສະຫຼຸບໄດ້ບາງບັນຫາຕົ້ນຕໍທາງນັກຮຽນບໍ່ມັກການອ່ານ ແລະ ບໍ່ມີທັກສະການອ່ານ ແມ່ນຍ້ອນຄູສອນເລືອກວິທີການສອນທີ່ບໍ່ສອດຄ່ອງ, ບໍ່ເໝາະສົມກັບການສອນພາກອ່ານ ແລະ ອີກບັນຫາໜຶ່ງແມ່ນຍ້ອນວິທີຈັດກິດຈະກຳການຮຽນ-ການສອນຂອງຄູຕໍ່ກັບນັກຮຽນທີ່ມີຈຳນວນຫຼາຍ ບໍ່ສາມາດເຮັດໃຫ້ຜູຮຽນໄດ້ມີສ່ວນຮ່ວມໃນເວລາຮຽນໄດ້ຢ່າງທົ່ວເຖິງ. ສະນັ້ນ, ມັນຈຶ່ງເຮັດໃຫ້ການຈັດການຮຽນການສອນພາສາຝຣັ່ງບໍ່ໄດ້ຮັບຜົນດີເທົ່າທີ່ຄວນ.

ຈາກສະພາບບັນຫາທີ່ພົບໃນໄລຍະຜ່ານມາໄດ້ເຮັດໃຫ້ຜູ້ວິໄຈມີຄວາມສົນໃຈຢາກນຳໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ ມາໃຊ້ເຂົ້າໃນການພັດທະນາ

ທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ດ້ວຍຄວາມຫ້ວງທີ່ວ່າອາດເປັນອີກທາງເລືອກໜຶ່ງທີ່ດີ ທີ່ຈະສາມາດພັດທະນາທັກສະການອ່ານພາສາຝຣັ່ງຂອງນັກຮຽນໃຫ້ດີຂຶ້ນ, ຊ່ວຍກະຕຸ້ນຜູ້ຮຽນ ໂດຍວິທີການໃຊ້ຄຳຖາມຂອງຄູ ເຊິ່ງເປັນຄຳຖາມທີ່ສັ້ນກະທັດຫັດ, ຈະແຈ້ງກຽ່ວພັນກັບບົດເລື່ອງ ແລະ ເລີ່ມຈາກຄຳຖາມທີ່ງ່າຍດາຍ ໄປຈົນເຖິງຄຳຖາມທີ່ເຮັດໃຫ້ນັກຮຽນຕ້ອງໄດ້ປະກອບສ່ວນຄວາມຄິດເຫັນຂອງຕົນເອງ ເພື່ອອະທິບາຍເຫດຜົນ, ນັກຮຽນໄດ້ສົນທະນາກັບໝູ່ເພື່ອຫາຄຳຕອບ ແລະ ໄດ້ສະຫຼຸບຄຳຕອບ ແລກປ່ຽນແນວຄວາມຄິດເຊິ່ງກັນ ແລະ ກັນ, ທຸກຄົນໃນກຸ່ມໄດ້ປະກອບສ່ວນຕອບຄຳຖາມຢູ່ໜ້າກະດານນຳກັນມັນຈະຊ່ວຍໃຫ້ນັກຮຽນມີຄວາມກະຕືລືລົ້ນ ແລະ ເຊື່ອໝັ້ນໂຕເອງຫຼາຍຂຶ້ນ, ຝຶກຝົນໃຫ້ນັກຮຽນກ້າເວົ້າກ້າສະແດງອອກ ເພາະມີໝູ່ທຸກຄົນໃນກຸ່ມຢູ່ຂ້າງໆໃຫ້ກຳລັງໃຈ. ດັ່ງນັ້ນ, ຜູ້ວິໄຈຈຶ່ງມີຄວາມເຊື່ອໝັ້ນວ່າການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມມັນຈະສາມາດພັດທະນາທັກສະການອ່ານພາສາຝຣັ່ງຂອງນັກຮຽນໄດ້ດີຫຼາຍຂຶ້ນ ແລະ ເຮັດໃຫ້ນັກຮຽນມີຄວາມມັກ ຮັກໃນການອ່ານໄດ້ດີຂຶ້ນ.

ການຄົ້ນຄວ້າຄັ້ງນີ້ແມ່ນມີຈຸດປະສົງຄື: ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄາຖາມ ແລະ ເພື່ອສອບຖາມຄວາມເພິງພໍໃຈຂອງນັກຮຽນ ຕໍ່ກັບທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຜົນການຮຽນກ່ອນ ແລະ ຫຼັງການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ ເປັນແນວໃດ?

2. ຄວາມເພິງພໍໃຈຂອງນັກຮຽນຕໍ່ກັບທັກສະການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມເປັນແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1.ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ

.

2. ເພື່ອສອບຖາມຄວາມເພິງພໍໃຈຂອງນັກຮຽນ ຕໍ່ທັກສະການອ່ານພາສາຝຣັ່ງໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

Soulivongxay (2023) ສຶກສາການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມເລື່ອງ the boat racing festival ດ້ວຍວິທີສອນແບບ think-pair-share ຂັ້ນ ມ. 3 ທີ່ໂຮງຮຽນມັດທະຍົມສົມບູນຊຽງຮ່ອນ ເມືອງຊຽງຮ່ອນ ແຂວງໄຊຍະບູລີ, ຜົນການວິໄຈພົບວ່າຜົນການຮຽນຂອງນັກຮຽນຕໍ່ການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມເລື່ອງ the boat racing festival ດ້ວຍວິທີສອນແບບ think-pair-share ແມ່ນຢູ່ໃນລະດັບເກັ່ງດ້ວຍຄ່າ( $\overline{X}$ =8,92 and S.D=1,05) ແລະ ນັກຮຽນມີຄວາມເພິງພໍໃຈຕໍ່ການຈັດກິດຈະກຳການຮຽນ-ການສອນອ່ານຈັບໃຈຄວາມເລື່ອງ the boat recing festival ດ້ວຍວິທີສອນແບບ think-pair-share ແມ່ນຢູ່ໃນລະດັບເພິງພໍໃຈຫຼາຍທີ່ສຸດດ້ວຍຄ່າ( $\overline{X}$ =4,58 and S.D=0,55).

Prombud (2021) ໄດ້ສຶກສາການພັດທະນາຄວາມສາມາດດ້ານການອ່ານຈັບໃຈຄວາມຂອງນັກຮຽນມັດທະຍົມຂັ້ນ ມ. 1 ໂດຍໃຊ້ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ ຈຸດປະສົງຂອງການສຶກສາຄົ້ນຄວ້າຄັ້ງນີ້ແມ່ນ 1) ເພື່ອສົມທຽບຄວາມສາມາດໃນການອ່ານເພື່ອຄວາມເຂົ້າໃຈຄວາມໝາຍຂອງນັກຮຽນຂັ້ນ ມ. 1 ກ່ອນຮຽນ ແລະ ຫຼັງຮຽນດ້ວຍເທັກນິກ think-pair-share 2) ສຶກສາຄວາມຄິດເຫັນຂອງນັກຮຽນມັດທະຍົມຂັ້ນ ມ. 1 ຕໍ່ກັບເທັກນິກ think-pair-share ຄວບຄູ່ການໃຊ້ຄຳຖາມ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າແມ່ນນັກຮຽນມັດທະຍົມຂັ້ນ ມ. 1 ຫ້ອງ ມ. 1/1 ທີ່ໂຮງຮຽນທັນຍາລັດ ເມືອງລັນບູລີ ແຂວງປະທຸມທານີ ພາກຮຽນທີ 2 ປີ 2021 ມີ 34 ຄົນທີ່ໄດ້ຈາກການສຸ່ມແບບງ່າຍດາຍໂດຍໃຊ້ວິທີຈັບສະຫຼາກໂດຍການໃຊ້ຫ້ອງຮຽນເປັນໜ່ວຍສຸ່ມ ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າມີ 1) ແຜນການຈັດການຮຽນຮູ້ດ້ວຍເທັກນິກ think-pair-share ກັບການໃຊ້ຄຳຖາມ 2) ແບບທົດສອບວັດຄວາມສາມາດດ້ານການອ່ານຈັບໃຈຄວາມ 3) ແບບສອບຖາມຄວາມຄິດເຫັນຂອງນັກຮຽນທີ່ມີຕໍ່ເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມ. ການວິເຄາະຫາຂໍ້ມູນແມ່ນໃຊ້ຄ່າສະເລ່ຍ ແລະ ສ່ວນບ່ຽງເບນມາດຕະຖານ ແລະ ການທົດສອບຄ່າທີ່ບໍ່ເປັນອິດສະຫຼະຕໍ່ກັນ(Dependent Samples t-test. ຜົນການຄົ້ນຄວ້າພົບວ່າ 1) ຄວາມສາມາດດ້ານການອ່ານຈັບໃຈຄວາມຂອງນັກຮຽນມັດທະຍົມຂັ້ນ ມ. 1 ທີ່ຈັດການຮຽນຮູ້ດ້ວຍເທັກນິກ think-pair-share ກັບການໃຊ້ຄຳຖາມ ຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. 2) ນັກຮຽນມີຄວາມຄິດເຫັນຕໍ່ການຈັດການຮຽນຮູ້ດ້ວຍເທັກນິກ think-pair-share ຮ່ວມກັບການໃຊ້ຄຳຖາມໂດຍລວມແມ່ນຢູ່ໃນລະດັບເຫັນດີຫຼາຍທີ່ສຸດ.

Sommai (2021) ການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິກ think-pair-share ສຳລັບນັກຮຽນຊັ້ນມັດທະຍົມປີທີ 2 ຈຸດປະສົງຂອງການວິໄຈແມ່ນ 1) ເພື່ອສຶກສາການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບການໃຊ້ເທັກນິກການສອນແບບ think-pair-share ສຳລັບນັກຮຽນຊັ້ນມັດທະຍົມປີທີ 2 ກັບເກນຮ້ອຍລະ 75 2) ເພື່ອພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິກການສອນແບບ think-pair-share ຂອງນັກຮຽນຊັ້ນມັດທະຍົມປີທີ 2 ເຊິ່ງຜູ້

ວິໄຈໄດ້ດຳເນີນຕາມລະບຽບວິທີວິໄຈແບບການວິໄຈເຊີງຄຸນນະພາບ ໂດຍກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈແມ່ນນັກຮຽນຊັ້ນມັດທະຍົມປີທີ 2 ພາກຮຽນທີ 2 ປີ 2021 ໂຮງຮຽນຄຸນປັນຍາ ເມືອງຕາກແຂວງຕາກສຳນັກງານເຂດພື້ນທີ່ການສຶກສາ ເຂດ 38 ຈຳນວນ 38 ຄົນ ໃຊ້ວິທີຊຸ່ມກຸ່ມຕົວຢ່າງແບບເຈາະຈົງ ແລະ ດຳເດີນການວິເຄາະຂໍ້ມູນໂດຍ ຄ່າຄວາມຖີ່ ຄ່າຮ້ອຍລະ ຄ່າສະເລ່ຍ ແລະ ສ່ວນບ່ຽງເບນມາດຕະຖານ ຄ່າດັດສະນີຄວາມສອດຄ່ອງ ຜົນການວິໄຈພົບວ່າ 1) ຜົນການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິກການສອນແບບ think-pair-share ສຳລັບນັກຮຽນຊັ້ນມັດທະຍົມປີທີ 2 ກັບເກນຮ້ອຍລະ 75 ພົບວ່າການທົດສອບກ່ອນການຈັດການຮຽນຮູ້ການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິດການສອນແບບ think-pair-share ມີຄ່າສະເລ່ຍເທົ່າກັບ 9.97 ການທົດສອບຫຼັງຈັດການຮຽນຮູ້ມີຄ່າສະເລ່ຍເທົ່າກັບ 17.42 ແລະ ເມື່ອປຽບທຽບຜົນການທົດສອບກ່ອນ ແລະ ຫຼັງການຈັດການຮຽນຮູ້ພົບວ່ານັກຮຽນມີການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບການໃຊ້ເທັກນິກການສອນແບບ think-pair-share ສູງກວ່າເກນທີ່ຕັ້ງໄວ້ຮ້ອຍລະ 75 ຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ 0.05 2) ຜົນການສຶກສາການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິກການສອນແບບ think-pair-share ສຳລັບນັກຮຽນຊັ້ນມັດທະຍົມປີທີ 2 ພົບວ່າຜົນການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິກການສອນແບບ think-pair-share ຂອງນັກຮຽນຊັ້ນມັດທະຍົມປີທີ 2 ການທົດສອບກ່ອນການຈັດການຮຽນຮູ້ມີຄ່າສະເລ່ຍ 9.97 ຄ່າບ່ຽງເບນມາດຕະຖານ 2.20 ຄິດເປັນຮ້ອຍລະ 49.87 ການທົດສອບຫຼັງການຈັດການຮຽນຮູ້ມີຄ່າສະເລ່ຍ 17.49 ຄ່າບ່ຽງເບນມາດຕະຖານ 2.52 ຄິດເປັນຮ້ອຍລະ 87.11 ໂດຍມີຜົນຕ່າງຄິດເປັນຮ້ອຍລະ 37.24 ເມື່ອພິຈາລະນານັກຮຽນເປັນລາຍບຸກຄົນພົບວ່ານັກຮຽນທີ່ມີຜົນການທົດສອບຫຼັງການຈັດການຮຽນຮູ້ສູງສຸດ 3 ອັນດັບຄື ອັນກັບທີ 1 ນັກຮຽນເລກທີ 4, 33, 37 ເພີ່ມຂຶ້ນຮ້ອຍລະ 55.00 ອັນດັບທີ 2 ນັກຮຽນເລກທີ 2, 3, 23, 38 ເພີ່ມຂຶ້ນຮ້ອຍລະ 50.00 ແລະ ອັນດັບທີ 3 ນັກຮຽນເລກທີ 5, 11, 12, 14, 29, 30, 36 ເພີ່ມຂຶ້ນຮ້ອຍລະ 45.00.

Oodcommee and Topithak (2023) ການພັດທະນາທັກສະການອ່ານຈັບໃຈຄວາມໂດຍໃຊ້ການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມສຳລັບນັກຮຽນຊັ້ນປະຖົມປີທີ 2 ການວິໄຈຄັ້ງນີ້ມີຈຸດປະສົງ 1) ເພື່ອປຽບທຽບທັກສະການອ່ານຈັບໃຈຄວາມໂດຍໃຊ້ການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມສຳລັບນັກຮຽນຊັ້ນປະຖົມປີທີ 2 ລະຫວ່າງກ່ອນຮຽນ ແລະ ຫຼັງຮຽນ 2) ເພື່ອປຽບທຽບທັກສະການອ່ານຈັບໃຈຄວາມໂດຍໃຊ້ຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມສຳລັບນັກຮຽນຊັ້ນປະຖົມປີທີ 2 ກັບເກນຮ້ອຍລະ 80 3) ເພື່ອສຶກສາຄວາມເພິງພໍໃຈຂອງນັກຮຽນຊັ້ນປະຖົມປີທີ 2 ທີ່ມີຕໍ່ການຮຽນຮູ້ໂດຍການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມ ກຸ່ມຕົວຢາງແມ່ນໄດ້ມາຈາກການເລືອກແບບເຈາະຈົງເຄື່ອງມືທີ່ນຳໃຊ້ໄດ້ແກ່ແຜນການຈັກການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການນຳໃຊ້ຄຳຖາມແບບວັດທັກສະການອ່ານຈັບໃຈຄວາມກ່ອນຮຽນຫຼັງຮຽນ ແລະ ແບບວັດຄວາມເພິງພໍໃຈທີ່ມີຕໍ່ການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການຕັ້ງຄຳຖາມ ແລະ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ຄ່າສະເລ່ຍ ຮ້ອຍລະ ສ່ວນບ່ຽງເບນມາດຕະຖານ ການທົດສອບ t-test dependent ຜົນການວິໄຈພົບວ່າ 1) ຜົນການປຽບທຽບຜົນສຳເລັດທາງການຮຽນກ່ອນຮຽນ ແລະ ຫຼັງຮຽນໂດຍການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມສຳລັບນັກຮຽນຊັ້ນປະຖົມປີທີ 2 ພົບວ່າຜົນການທົດສອບຫຼັງຮຽນສູງກວ່າກ່ອນຮຽນຢ່າງມີໃນສຳຄັນທາງສະຖິຕິທີ່ລະດັບ 0.05 2) ຜົນການປຽບທຽບຜົນສຳເລັດທາງການຮຽນກ່ອນຮຽນ ແລະ ຫຼັງຮຽນໂດຍການຈັດການຮຽນຮູ້ແບບ Think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມສຳລັບນັກຮຽນຊັ້ນປະຖົມປີທີ 2 ກັບຮ້ອຍລະ 80 ພົບວ່າຜົນການສອບຫຼັງຮຽນສູງກວ່າກ່ອນຮຽນຮ້ອຍລະ 86.92 3)ຜົນການສຶກສາຄວາມເພິງພໍໃຈຂອງນັກຮຽນຊັ້ນປະຖົມປີທີ 2 ທີ່ມີຕໍ່ການໃຊ້ແຜນການຈັດການຮຽນຮູ້ແບບ think-pair-share ຮ່ວມກັບແນວຄິດການໃຊ້ຄຳຖາມໂດຍພາບລວມຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ ເທົ່າກັບຄ່າສະເລ່ຍ 4.75 ຮ້ອຍລະ 94.92 ຄ່າບ່ຽງເບນມາດຕະຖານ 0.50 ເກນການປະເມີນຫຼາຍທີ່ສຸດ.

## 3. ວິທີດຳເນີນການຄົ້ນຄວ້າ

ວິທີການສຶກສາຄັ້ງນີ້ເປັນການສຳຫຼວດໂດຍເນັ້ນໃສ່ການສຶກສາຂໍ້ມູນທີ່ສາມາດວັດຄ່າໄດ້ໃຫ້ເປັນຕົວເລກ ຕາມໃນຂອບເຂດທີ່ກຳນົດເພື່ອວິເຄາະຜົນທີ່ເກີດຂຶ້ນ ດ້ວຍສູດຄະແນນ ແລະ ສະຖິຕິພື້ນຖານເຊັ່ນ: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ນັກຮຽນມັດທະຍົມຊັ້ນ ມ.4 ເຊິ່ງມີ ຈຳນວນນັກຮຽນທັງໝົດ 59 ຄົນ, ຍິງ 25 ຄົນ ພາກຮຽນທີ 1 ສົກຮຽນ 2024-2025 ທີ່ໂຮງຮຽນມັດທະຍົມສົມບູນສາທິດ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນນັກຮຽນຫ້ອງມ.4/2 ຈຳນວນ 21 ຄົນ, ຍິງ 13 ຄົນ ມາເປັນກຸ່ມຕົວຢ່າງ. ໂດຍໃຊ້ວິທີເລືອກແບບເຈາະຈົງ ພາກຮຽນທີ 1 ສົກຮຽນ 2024-2025 ທີ່ໂຮງຮຽນມັດທະຍົມສົມບູນສາທິດ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າມີ: 1). ແຜນການຈັດການຮຽນຮູ້ (ແຜນການສອນ) ດ້ວຍວິທີສອນແບບ think-

pair-share ຮ່ວມກັບການໃຊ້ຄຳຖາມ ຈຳນວນ 5 ແຜນ; 2). ແບບທົດສອບວັດຄວາມສາມາດດ້ານການອ່ານເພື່ອຄວາມເຂົ້າໃຈ 1 ຊຸດ ແລະ 3). ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ 1 ຊຸດ.

*3.3 ວິທີເກັບກຳຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ດຳເນີນການຄົ້ນຄວ້າໃນພາກຮຽນທີ 1 ສົກຮຽນ 2024-2025 ໂດຍໄລຍະເວລາທົດລອງສອນກວມເອົາ 5 ອາທິດ, ອາທິດລະ 2 ຊົ່ວໂມງ ລວມເປັນ 10 ຊົ່ວໂມງ, ບໍ່ລວມການເຮັດແບບທົດສອບກ່ອນຮຽນ ແລະ ຫຼັງຮຽນ ແລະ ແບບສອບຖາມ. ທີ່ໂຮງຮຽນມັດທະຍົມສົມບູນສາທິດ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.

**-ຜູ້ຄົ້ນຄວ້າໄດ້ດຳເນີນການທົດລອງໂດຍແບ່ງອອກເປັນ 3 ຂັ້ນຕອນຄື :**

**ຂັ້ນຕອນທີ1**: ແມ່ນຂັ້ນກ່ອນການສອນເປັນຂັ້ນທີ່ຜູ້ຄົ້ນຄວ້າກຽມຄວາມພ້ອມໃນດ້ານຕ່າງໆ: 1). ຜູ້ຄົ້ນຄວ້າອະທິບາຍການຈັດການຮຽນ-ການສອນດ້ວຍວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ; 2). ໃຫ້ນັກຮຽນກຸ່ມຕົວຢ່າງເຮັດແບບທົດສອບກ່ອນການຈັດການຮຽນ (pretest) ເພື່ອທົດສອບຄວາມສາມາດອ່ານເພື່ອຄວາມເຂົ້າໃຈຂອງນັກຮຽນທີ່ຜູ້ວິໄຈສ້າງຂຶ້ນ.

**ຂັ້ນຕອນທີ 2:** ແມ່ນຂັ້ນສິດສອນຜູ້ຄົ້ນຄວ້າ ລົງມືສອນຕົວຈິງ ໂດຍໃຊ້ເຕັກນິກການສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມຈຳນວນ 5 ບົດ ໂດຍໃຊ້ເວລາສອນ 5 ອາທິດ ລວມທັງໝົດ 10 ຊົ່ວໂມງ.

**ຂັ້ນຕອນທີ 3:** ແມ່ນຂັ້ນຫຼັງການສອນຜູ້ຄົ້ນຄວ້າໄດ້ເອົາແບບທົດສອບໃຫ້ນັກຮຽນເຮັດ (posttest) ເພື່ອວັດຄວາມສາມາດດ້ານການອ່ານເພື່ອຄວາມເຂົ້າໃຈຂອງນັກຮຽນ ເມື່ອນັກຮຽນເຮັດແບບທົດສອບແລ້ວໆ ຜູ້ວິໄຈກໍ່ເກັບຄືນໃຫ້ຄົບຕາມຈຳນວນ ແລ້ວກໍ່ໄດ້ຢາຍແບບສອບຖາມຄວາມເພິ່ງພໍໃຈຕໍ່ກັບວິທີສອນແບບThink-pair-share ຮ່ວມກັບການໃຊ້ຄຳຖາມໃຫ້ນັກຮຽນເຮັດ, ເມື່ອນັກຮຽນຕອບແລ້ວໆຜູ້ຄົ້ນຄວ້າກໍ່ໄດ້ເກັບຄືນໃຫ້ຄົບຕາມຈຳນວນ.

*3.4 ການວິເຄາະຂໍ້ມູນ*

ນຳໃຊ Dependent t-test ເຂົ້າໃນການຄິດໄລ່ແບບທົດສອບກ່ອນຮຽນ ແລະ ຫຼັງຮຽນ ມີທັງໝົດ 30 ຂໍ້ ແລະ ໃຫ້ຂໍ້ລະ 1 ຄະແນນ ເຊິ່ງຄະແນນເຕັມຂອງແບບທົດສອບແມ່ນ 30 ຄະແນນ. ນາຄະແນນທີ່ໄດ້ຈາກການທົດສອບກ່ອນ ແລະ ຫຼັງມາຄິດໄລ່ຫາຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ ແລະ ຄ່າຄວາມເຊື່ອໝັ້ນທາງສະຖິຕິ ຕາມສູດ (Nitko and Brookhart, 2014). ໂດຍມີເກນການແປຜົນດັ່ງນີ້:

| **ຄະແນນ** | **ຄ່າສະເລ່ຍ** | **ແປຜົນ** |
|---|---|---|
| 27-30 | 90-100% | ດີຫຼາຍ |
| 24-26 | 80-89% | ດີ |
| 21-23 | 70-79% | ປານກາງ |
| 18-20 | 60-69% | ພໍໃຊ້ |
| 15-17 | 50-59% | ອ່ອນຫຼາຍ |
| 0-14 | 0-49% | ບໍ່ຜ່ານ |

ການຊອກຫາລະດັບຄວາມສຳຄັນທາງສະຖິຕິແມ່ນຄິດໄລ່ຕາມສູດຂອງ (Fisher, 1925). ການແປຄວາມໝາຍຂອງ P ມີຄື: ຖ້າ $P < 0.05$ ແມ່ນມີຄວາມສຳຄັນທາງສະຖິຕິ ແລະ ຖ້າ $P \geq 0.05$ ແມ່ນບໍ່ມີຄວາມສຳຄັນທາງສະຖິຕິ.

ສຳລັບແບບສອບຖາມຄວາມເພິງພໍໃຈຂອງນັກຮຽນແມ່ນຄິດໄລ່ຕາມເກນຄ່າສະເລ່ຍ (Best, 1986) ຕາມເກນດັ່ງນີ້.

- ຄ່າສະເລ່ຍລະຫວ່າງ 4,51 – 5,00 ໝາຍເຖິງມີຄວາມເພິ່ງພໍໃຈຫຼາຍທີ່ສຸດ
- ຄ່າສະເລ່ຍລະຫວ່າງ 3,51 – 4,50 ໝາຍເຖິງມີຄວາມເພິ່ງພໍໃຈຫຼາຍ
- ຄ່າສະເລ່ຍລະຫວ່າງ 2,51 – 3,50 ໝາຍເຖິງມີຄວາມເພິ່ງພໍໃຈປານກາງ
- ຄ່າສະເລ່ຍລະຫວ່າງ 1,51 – 2,50 ໝາຍເຖິງມີຄວາມເພິ່ງພໍໃຈໜ້ອຍ
- ຄ່າສະເລ່ຍລະຫວ່າງ 1,00 – 1,50 ໝາຍເຖິງມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 4. ຜົນການຄົ້ນຄວ້າ

ຜູ້ຄົ້ນຄວ້າໄດ້ນຳແບບທົດສອບກ່ອນຮຽນ ແລະ ຫຼັງຮຽນພ້ອມກັບແບບສອບຖາມຄວາມເພິງພໍໃຈມາບັນທຶກຄະແນນ ແລະ ຄິດໄລ່ເພື່ອນຳຜົນຂອງເຄື່ອງມືດັ່ງກ່າວມາຕອບຕາມຈຸດປະສົງຂອງບົດຄົ້ນຄວ້າໃນຄັ້ງນີ້ເຊິ່ງມີຜົນໄດ້ຮັບດັ່ງນີ້:

*4.1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນກຸ່ມດຽວໄດ້ແກ່ນັກຮຽນຊັ້ນມັດທະຍົມ ປີທີ 4 ຫ້ອງມ.4/2 ເຊິ່ງມີຈຳນວນທັງໝົດ 21 ຄົນ ຍິງ 13 ຄົນທີ່ໂຮງຮຽນມມັດທະຍົມສົມບູນສາທິດ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.

*4.2 ຜົນໄດ້ຮັບຈາກແບບທົດສອບ*

ການທົດສອບຜົນການຮຽນຂອງນັກຮຽນຈຳນວນ 21 ຄົນ ມີທັງໝົດ 30 ຂໍ້ ຂໍ້ລະ 1 ຄະແນນ ລວມທັງໝົດ 30 ຄະແນນ ພົບວ່າ: ຜົນການທົດສອບຫຼັງການຮຽນຂອງນັກຮຽນມີຄ່າ (Mean= 24.69, S.D= 2.70) ຕາຕະລາງ 1. ຖ້າທຽບໃສ່ເກນແມ່ນຢູ່ໃນລະດັບດີ ແລະ ກ່ອນຮຽນແມ່ນມີຄ່າ (Mean= 9.50, S.D= 1.35) ຖ້າທຽບໃສ່ເກນແມ່ນຢູ່ໃນລະດັບບໍ່ຜ່ານ. ສະນັ້ນ, ຈຶ່ງເວົ້າໄດ້ວ່າຜົນການຮຽນຂອງນັກຮຽນຕໍ່ການພັດທະນາທັກສະການ

ອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ ຂອງນັກຮຽນ ຫຼັງຮຽນແມ່ນສູງກວ່າກ່ອນຮຽນດ້ວຍລະດັບຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 (ຕາຕະລາງ 2) ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

ຕາຕະລາງ 1. ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຄະແນນກ່ອນຮຽນ ແລະ ຫຼັງຮຽນ

| | | Mean | N | Std. Deviation | Std. Error Mean |
|---|---|---|---|---|---|
| Pair 1 | Postest | 24.67 | 21 | 2.708 | .591 |
| | Pretest | 9.05 | 21 | 1.359 | .297 |

ຕາຕະລາງ 2: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຄະແນນກ່ອນຮຽນ ແລະ ຫຼັງຮຽນ

Paired Samples Test

| | | Paired Differences | | | | | t | df | Sig. (2-tailed) |
|---|---|---|---|---|---|---|---|---|---|
| | | Mean | Std. Deviation | Std. Error Mean | 95% Confidence Interval of the Difference | | | | |
| | | | | | Lower | Upper | | | |
| Pair 1 | Postest - Pretest | 15.619 | 2.974 | .649 | 14.265 | 16.973 | 24.063 | 20 | .000 |

*4.3 ຜົນໄດ້ຮັບຈາກແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນ*

ຕາຕະລາງ 3: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຕໍ່ດ້ານເທັກນິກວິທີສອນ

| ລ/ດ | ເນື້ອໃນການປະເມີນ | $\overline{X}$ | SD | ແປຜົນ |
|---|---|---|---|---|
| **I ດ້ານເທັກນິກວິທີການສອນ** | | | | |
| 1 | ເພິ່ງພໍໃຈຕໍ່ກິດຈະກຳຂັ້ນ think | 4.66 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| 2 | ເພິ່ງພໍໃຈຕໍ່ກິດຈະກຳຂັ້ນ pair | 4.38 | 0.49 | ເພິ່ງພໍໃຈຫຼາຍ |
| 3 | ເພິ່ງພໍໃຈຕໍ່ກິດຈະກຳຂັ້ນ share | 4.71 | 0.46 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ເພິ່ງພໍໃຈຕໍ່ ຄຳຖາມທີ່ຄູສ້າງ | 4.66 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| ສະເລ່ຍ | | 4.60 | 0.01 | ເພິ່ງພໍໃຈຫຼາຍທີ່ສຸດ |

ຈາກຕາຕະລາງ 3 ພົບວ່າລະດັບຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານເທັກນິກວິທີການສອນແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ວາງໄວ້ ໂດຍມີ $\overline{X}$ = 4.60 ແລະ SD= 0.01 ເຊິ່ງໃນນັ້ນຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນນັກຮຽນເພິ່ງພໍໃຈຕໍ່ກິດຈະກຳຂັ້ນ share ແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ ໂດຍມີ $\overline{X}$ = 4.71 ແລະ SD = 0.46 ຮອງລົງມາແມ່ນນັກຮຽນເພິ່ງພໍໃຈຕໍ່ກິດຈະກຳຂັ້ນ think ແລະ ນັກຮຽນເພິ່ງພໍໃຈຕໍ່ຄຳຖາມທີ່ຄູສ້າງ ແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ວາງໄວ້ ໂດຍມີ $\overline{X}$ = 4.66 ແລະ SD= 0.48 ຂໍ້ທີ່ມີຄ່າສະເລ່ຍໜ້ອຍສຸດແມ່ນນັກຮຽນເພິ່ງພໍໃຈຕໍ່ກິດຈະກຳຂັ້ນ pair ແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍ ໂດຍມີ $\overline{X}$ = 4.38 ແລະ SD = 0.49

ຕາຕະລາງ 4 : ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຕໍ່ດ້ານການຈັດກິດຈະກຳການຮຽນ-ການສອນ

| ລ/ດ | ເນື້ອໃນການປະເມີນ | x | SD | ແປຜົນ |
|---|---|---|---|---|
| **II ດ້ານການຈັດກິດຈະກຳການຮຽນ-ການສອນ** | | | | |
| 1 | ເພິ່ງພໍໃຈຕໍ່ກິດຈະກຳການຮຽນ-ການສອນຂອງຄູ | 4.61 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| 2 | ພໍໃຈຕໍ່ການອ່ານບົດເລື່ອງ ແລະ ຕອບຄຳຖາມຂອງຄູ | 4.71 | 0.46 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ເພິ່ງພໍໃຈຕໍ່ການເຮັດວຽກເປັນກຸ່ມ ແລະ ໄດ້ແລກປ່ຽນຄຳຕອບຮ່ວມກັນ | 4.57 | 0.50 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ເພິ່ງພໍໃຈຕໍ່ການນຳສະເໜີຄຳຕອບຢູ່ໜ້າກະດານເປັນກຸ່ມ | 4.76 | 0.43 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ເພິ່ງພໍໃຈຕໍ່ການແບ່ງວຽກພາຍໃນກຸ່ມ | 4.71 | 0.46 | ເພິ່ງພໍໃຈຫຼາຍທີ່ສຸດ |
| ສະເລ່ຍ | | 4.67 | 0.02 | ເພິ່ງພໍໃຈຫຼາຍທີ່ສຸດ |

ຈາກຕາຕະລາງ 4 ພົບວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ດ້ານການຈັດກິດຈະກຳການຮຽນ-ການສອນ ຖ້າທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.67 ແລະ SD = 0.02 ໃນນັ້ນຂໍ້ທີ່ມີຄະແນນສະເລ່ຍສູງສຸດແມ່ນນັກຮຽນເພິ່ງພໍໃຈຕໍ່ການນຳສະເໜີຄຳຕອບຢູ່ໜ້າກະດານເປັນກຸ່ມແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຖ້າທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.76 ແລະ SD= 0.43 ຮອງລົງມາແມ່ນນັກຮຽນເພິ່ງພໍໃຈຕໍ່ການແບ່ງວຽກພາຍໃນກຸ່ມ ແລະ ນັກຮຽນເພິ່ງພໍໃຈຕໍ່ການອ່ານບົດເລື່ອງ ແລະ ຕອບຄຳຖາມຂອງຄູ ເຊິ່ງເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.71 ແລະ SD =

0.46 ທັດມາແມ່ນນັກຮຽນເພິ່ງພໍໃຈຕໍ່ກິດຈະກຳການຮຽນ-ການສອນຂອງຄູແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.61 ແລະ SD= 0.49 ແລະຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດແມ່ນນັກຮຽນເພິ່ງພໍໃຈຕໍ່ການເຮັດວຽກເປັນກຸ່ມ ແລະ ໄດ້ແລກປ່ຽນຄຳຕອບຮ່ວມກັນ ເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.57 ແລະ SD = 0.50

ຕາຕະລາງ 5 : ສະແດງຄ່າສະເລ່ຍ ແລະ ຄ່າພົນປ່ຽນມາດຕະຖານຕໍ່ດ້ານປົດບາດຄູ

| ລ/ດ | ເນື້ອໃນການປະເມີນ | x | SD | ແປຜົນ |
|---|---|---|---|---|
| **III ດ້ານປົດບາດຄູ** | | | | |
| 1 | ເພິ່ງພໍໃຈຕໍ່ຄູທີ່ກະຕຸ້ນໃຫ້ນັກຮຽນມີຄວາມສົນໃຈຢາກອ່ານປົດເລື່ອງ ແລະ ໄດ້ຕອບຄຳຖາມ | 4.71 | 0.46 | ເພິ່ງພໍໃຈຫຼາຍທີ່ສຸດ |
| 2 | ເພິ່ງພໍໃຈຕໍ່ຄູທີ່ໄດ້ເປີດໂອກາດໃຫ້ນັກຮຽນໄດ້ຄົ້ນຄິດດ້ວຍຕົນເອງ ແລະ ແລກປ່ຽນຄວາມຄິດນຳກັນເປັນກຸ່ມ | 4.71 | 0.46 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ເພິ່ງພໍໃຈຕໍ່ຄູທີ່ອຳນວຍຄວາມສະດວກໃຫ້ແກ່ນັກຮຽນໃນເວລາເຮັດກິດຈະກຳ | 4.66 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| 4 | ເພິ່ງພໍໃຈຕໍ່ຄູທີ່ໃຊ້ສື່ການສອນປະກອບການຮຽນການສອນ | 4.66 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| 5 | ເພິ່ງພໍໃຈຕໍ່ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມທີ່ຄູນຳມາສອນ | 4.61 | 0.49 | ເພິ່ງພໍໃຈຫຼາຍທີ່ສຸດ |
| ສະເລ່ຍ | | 4.67 | 0.01 | ເພິ່ງພໍໃຈຫຼາຍທີ່ສຸດ |

ຈາກຕາຕະລາງ 5 ພົບວ່າວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ດ້ານປົດບາດຄູເມື່ອທຽບໃສ່ເກນທີ່ວາງໄວ້ ເຊິ່ງ ມີ $\overline{X}$ = 4.67 ແລະ SD = 0.01 ໃນນັ້ນຂໍ້ທີ່ມີຄະແນນສະເລ່ຍສູງສຸດແມ່ນນັກຮຽນເພິ່ງພໍໃຈຕໍ່ຄູທີ່ກະຕຸ້ນໃຫ້ນັກຮຽນມີຄວາມສົນໃຈຢາກອ່ານປົດເລື່ອງ ແລະ ໄດ້ຕອບຄຳຖາມ ແລະ ນັກຮຽນມີຄວາມເພິ່ງພໍໃຈຕໍ່ຄູທີ່ໄດ້ເປີດໂອກາດໃຫ້ນັກຮຽນໄດ້ຄົ້ນຄິດດ້ວຍຕົນເອງ ແລະ ແລກປ່ຽນຄວາມຄິດນຳກັນເປັນກຸ່ມເຊິ່ງເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ $\overline{X}$ = 4.71 ແລະ SD = 0.46 ຮອງລົງມາແມ່ນນັກຮຽນເພິ່ງພໍໃຈຕໍ່ຄູທີ່ອຳນວຍຄວາມສະດວກໃຫ້ແກ່ນັກຮຽນໃນເວລາເຮັດກິດຈະກຳ ແລະ ນັກຮຽນມີຄວາມເພິ່ງພໍໃຈຕໍ່ຄູທີ່ໃຊ້ສື່ການສອນປະກອບການຮຽນ-ການສອນ ເຊິ່ງເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.66 ແລະ SD= 0.48 ແລະຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດແມ່ນ ນັກຮຽນເພິ່ງພໍໃຈຕໍ່ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມທີ່ຄູນຳມາສອນເຊິ່ງ ເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.61 ແລະ SD = 0.49.

ຕາຕະລາງ 6 ສະແດງຄ່າສະເລ່ຍ ແລະ ຄ່າພົນປ່ຽນມາດຕະຖານຕໍ່ດ້ານບັນຍາກາດໃນຫ້ອງຮຽນ

| ລ/ດ | ເນື້ອໃນການປະເມີນ | X | SD | ແປຜົນ |
|---|---|---|---|---|
| **IV ດ້ານບັນຍາກາດໃນຫ້ອງຮຽນ** | | | | |
| 1 | ເພິ່ງພໍໃຈຕໍ່ບັນຍາການການຮຽນຮູ້ແບບທີ່ຄູຈັດ | 4.38 | 0.49 | ເພິ່ງພໍໃຈຫຼາຍ |
| 2 | ເພິ່ງພໍໃຈຕໍ່ຮູບແບບກິດຈະກຳທີ່ມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ | 4.76 | 0.43 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ເພິ່ງພໍໃຈຕໍ່ການເຮັດກິດຈະກຳເປັນກຸ່ມ | 4.66 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| ສະເລ່ຍ | | 4.60 | 0.03 | ເພິ່ງພໍໃຈຫຼາຍທີ່ສຸດ |

ຈາກຕາຕະລາງ 6 ພົບວ່າຄວາມເພິ່ງພໍໃຈຂອງນັກຮຽນຕໍ່ດ້ານບັນຍາກາດໃນຫ້ອງຮຽນແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍທີ່ສຸດ ຖ້າທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.60 ແລະ SD= 0.03 ເຊິ່ງໃນນັ້ນຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ນັກຮຽນເພິ່ງພໍໃຈຕໍ່ຮູບແບບກິດຈະກຳທີ່ມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ ແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.76 ແລະ SD = 0.43 ຮອງລົງມາແມ່ນນັກຮຽນມີຄວາມເພິ່ງພໍໃຈຕໍ່ການເຮັດກິດຈະກຳເປັນກຸ່ມແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່

ວາງໄວ້ໂດຍມີ $\overline{X}$ = 4.66 ແລະ SD= 0.48 ແລະຂໍ້ທີ່ມີຄ່າສະເລ່ຍໜ້ອຍສຸດແມ່ນ ນັກຮຽນເພິງພໍໃຈຕໍ່ບັນຍາກາດການຮຽນຮູ້ແບບທີ່ຖືຈັດ ແມ່ນເຮັດໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍ ເມື່ອທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.38 ແລະ SD = 0.49.

ຕາຕະລາງ 7 ສະແດງຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານຕໍ່ດ້ານການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ

| ລ/ດ | ເນື້ອໃນການປະເມີນ | X | SD | ແປຜົນ |
|---|---|---|---|---|
| **V ດ້ານການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ** | | | | |
| 1 | ເພິງພໍໃຈຕໍ່ການໄດ້ຮັບຄວາມຮູ້ເພີ່ມຂຶ້ນຈາກການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ | 4.57 | 0.50 | ເພິງພໍໃຈຫຼາຍທີ່ສຸດ |
| 2 | ເພິ່ງພໍໃຈຕໍ່ການໄດ້ພັດທະນາທັກສະການອ່ານພາສາຝຣັ່ງ ແລະ ເຂົ້າໃຈໄດ້ງ່າຍຂຶ້ນຈາກວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ | 4.52 | 0.60 | ເພິງພໍໃຈຫຼາຍທີ່ສຸດ |
| 3 | ເພິງພໍໃຈຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ແລະ ສາມາດນຳໄປໃຊ້ກັບວິຊາອື່ນໆໄດ້ | 4.38 | 0.49 | ເພິງພໍໃຈຫຼາຍ |
| ສະເລ່ຍ | | 4.49 | 0.05 | ເພິງພໍໃຈຫຼາຍ |

ຈາກຕາຕະລາງທີ 7 ພົບວ່າຄວາມເພິງພໍໃຈຂອງນັກຮຽນຕໍ່ດ້ານການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈແມ່ນຢູ່ໃນລະດັບເພິງພໍໃຈຫຼາຍ ເມື່ອທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.49 ແລະ SD= 0.05 ເຊິ່ງໃນນັ້ນຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນ ນັກຮຽນເພິງພໍໃຈຕໍ່ການໄດ້ຮັບຄວາມຮູ້ເພີ່ມຂຶ້ນຈາກການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ສິ່ງຜົນໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດ ເມື່ອທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.57 ແລະ SD = 0.50 ຮອງລົງມາແມ່ນນັກຮຽນໄດ້ພັດທະນາທັກສະການອ່ານພາສາຝຣັ່ງ ແລະ ເຂົ້າໃຈໄດ້ງ່າຍຂຶ້ນຈາກວິທີສອນແບ think_pair_share ຮ່ວມກັບການໃຊ້ຄຳຖາມ ສິ່ງຜົນໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ຕັ້ງໄວ້ໂດຍມີ $\overline{X}$ = 4.52 ແລະ SD= 0.60 ແລະຂໍ້ທີ່ມີຄ່າສະເລ່ຍໜ້ອຍສຸດແມ່ນ ນັກຮຽນເພິງພໍໃຈຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ແລະ ສາມາດນຳໄປໃຊ້ກັບວິຊາອື່ນໆໄດ້ ສິ່ງຜົນໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍ ໂດຍມີ $\overline{X}$ = 4.38 ແລະ SD = 0.49.

ຕາຕະລາງ 8: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຕໍ່ທຸກດ້ານຂອງວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ

| ລ/ດ | ເນື້ອໃນການປະເມີນ | $\overline{X}$ | SD | ແປຜົນ |
|---|---|---|---|---|
| 1 | I ດ້ານເທັກນິກການສອນ | 4.60 | 0.01 | ເພິງພໍໃຈຫຼາຍທີ່ສຸດ |
| 2 | II ດ້ານການຈັດກິດຈະກຳການຮຽນ-ການສອນ | 4.67 | 0.02 | ເພິງພໍໃຈຫຼາຍທີ່ສຸດ |
| 3 | III ດ້ານບົດບາດຄູ | 4.67 | 0.01 | ເພິງພໍໃຈຫຼາຍທີ່ສຸດ |
| 4 | IV ດ້ານບັນຍາກາດໃນຫ້ອງຮຽນ | 4.60 | 0.03 | ເພິງພໍໃຈຫຼາຍທີ່ສຸດ |
| 5 | V ດ້ານການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ | 4.49 | 0.05 | ເພິງພໍໃຈຫຼາຍ |
| ສະເລ່ຍ | | 4.62 | 0.03 | ເພິງພໍໃຈຫຼາຍທີ່ສຸດ |

ຈາກຕາຕະລາງ 8 ສາມາດສັງລວມໄດ້ວ່າຄວາມເພິງພໍໃຈຂອງນັກຮຽນຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍນຳໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມແມ່ນຢູ່ໃນລະດັບເພິງພໍໃຈຫຼາຍທີ່ສຸດຖ້າທຽບໃສ່ເກນທີ່ຕັ້ງໄວ້ເຊິ່ງມີ $\overline{X}$ = 4.62 ແລະ SD= 0.03 ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນ ດ້ານບົດບາດຄູ ແມ່ນເຮັດໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດຖ້າທຽບໃສ່ເກນທີ່ຕັ້ງໄວ້ ໂດຍມີ $\overline{X}$ = 4.67 ແລະ SD= 0.01 ຮອງລົງມາແມ່ນດ້ານການຈັດກິດຈະກຳການຮຽນ-ການສອນແມ່ນເຮັດໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດເມື່ອຍທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.67 ແລະ SD= 0.02 ທັດມາແມ່ນດ້ານເທັກນິກການສອນເຮັດໃຫ້ນັກຮຽນມີຄວາມເພິງພໍໃຈຫຼາຍທີ່ສຸດເມື່ອທຽບໃສ່ເກນທີ່ວາງໄວ້ໂດຍມີ $\overline{X}$ = 4.60 ແລະ SD= 0.01 ທັດມາອີກແມ່ນດ້ານບັນຍາກາດໃນ

ຫ້ອງຮຽນແມ່ນເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດໂດຍ ມີ $\overline{X}$= 4.60 ແລະ SD= 0.03 ດ້ານທີ່ມີຄ່າສະເລ່ຍຕໍ່າສຸດ ແມ່ນ ດ້ານການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມ ເຂົ້າໃຈ ເຊິ່ງເຮັດໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍ ໂດຍມີ $\overline{X}$ = 4.49 ແລະ SD= 0.05

## 5. ອະພິປາຍຜົນ

ຈາກຜົນການວິໄຈພົບວ່າ: ຄວາມສາມາດອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ຂອງນັກຮຽນມັດທະຍົມສຶກສາ ຊັ້ນ ມ.4ໂດຍໃຊ້ວິທີສອນແບບ Think-pair-share ຮ່ວມກັບການໃຊ້ຄໍາຖາມ ຫຼັງຮຽນແມ່ນສູງກວ່າກ່ອນຮຽນດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.05% ເນື່ອງຈາກວ່າ ວິທີສອນແບບ think-pair-share ເປັນວິທີສອນທີ່ຄູໄດ້ຖາມຄໍາຖາມທີ່ງ່າຍຫາຍາກ ແລະ ກວມລວມບົດ ເລື່ອງເປີດໂອກາດໃຫ້ນັກຮຽນໄດ້ຄົ້ນຄິດຊອກຄໍາຕອບດ້ວຍຕົວເອງກ່ອນໂດຍອາໄສຄວາມຮູ້ເດີມປະສົມປະສານກັບການຄວາມຮູ້ໃໝ່ ແລະ ນັກຮຽນໄດ້ມີການແລກປ່ຽນຄໍາຕອບກັບໝູ່ເພື່ອນພາຍໃນກຸ່ມ, ເຮັດໃຫ້ນັກຮຽນເຂົ້າໃຈບົດເລື່ອງຫຼາຍຂຶ້ນ ແລະ ສຸດທ້າຍແມ່ນນັກຮຽນແຕ່ລະກຸ່ມໄດ້ນໍາສະເໜີຄໍາຕອບຂອງຕົນຢູ່ໜ້າກະດານ, ເຮັດໃຫ້ນັກຮຽນໄດ້ສະແດງຄວາມສາມາດຂອງຕົນ. ສະນັ້ນ, ມັນຈຶ່ງໄປສອດຄ່ອງກັບທິດສະດີຂອງ Lyman, (1981) ທີ່ໄດ້ເວົ້າວ່າວິທີສອນແບບ think-pair-share ແມ່ນການຊຸກຍູ້ການມີສ່ວນຮ່ວມຢ່າງກະຕືລືລົ້ນ, ນັກຮຽນແຕ່ລະຄົນໄດ້ມີເວລາຄິດກ່ອນຈະຕອບຫຼຸດຜ່ອນຄວາມຕື່ນເຕັ້ນທີ່ຈະຕອບ, ສົ່ງເສີມການແລກປ່ຽນຄວາມຄິດເຫັນໂດຍການເວົ້າລົມກັບໝູ່ເພື່ອນເພື່ອຫາຄໍາຕອບທີ່ເປັນເອກະພາບພາຍໃນກຸ່ມ, ພັດທະນາທັກສະການສື່ສານຕໍ່ການເວົ້າຄໍາຕອບຢູ່ໜ້າກະດານ ແລະ ການຮັບຟັງໝູ່ເພື່ອນໃນການສະແດງຄວາມຄິດເຫັນ ແລະ ສາມາດຊີ້ແຈງຄໍາຕອບໄດ້ຢ່າງມີເຫດຜົນ, ປັບຕົວໃຫ້ເຂົ້າກັບວິຊາ ແລະ ລະດັບຂອງໝູ່ເພື່ອນທີ່ແຕກຕ່າງກັນເຊິ່ງມັນຈະເຮັດໃຫ້ນັກຮຽນປະສົບຜົນສໍາເລັດທາງການຮຽນ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Prombud, (2021*)* ພົບວ່າ ຄວາມສາມາດດ້ານການອ່ານຈັບໃຈຄວາມຂອງນັກຮຽນມັດທະຍົມຊັ້ນ ມ. 1 ທີ່ຈັດການຮຽນຮູ້ດ້ວຍວິທີສອນແບບເພື່ອນຄູ່ຄິດກັບການໃຊ້ຄໍາຖາມ, ຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ 0.05 ແລະ ສອດຄ່ອງກັບຜົນການຄົ້ນຄວ້າຂອງ Soulivongxay, (2023) ຜົນການວິໄຈພົບວ່າຜົນການຮຽນຂອງນັກຮຽນຕໍ່ການຈັດກິດຈະກໍາການຮຽນ-ການສອນອ່ານຈັບໃຈຄວາມເລື່ອງ the boat racing festival ຂັ້ນ ມ. 3 ດ້ວຍວິທີສອນແບບ think-pair-share ແມ່ນຢູ່ໃນລະດັບເກັ່ງດ້ວຍຄ່າ ( $\overline{X}$=8,92 and S.D=1,05) ແລະ ຍັງສອດຄ່ອງກັບບົດຄົ້ນຄວ້າຂອງ Sommai (2021) ພົບວ່າການທົດສອບກ່ອນການຈັດການຮຽນຮູ້ການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບໃຊ້ເທັກນິດການສອນແບບ Think-pair-share ມີຄ່າສະເລ່ຍເທົ່າກັບ 9.97 ການທົດສອບຫຼັງຈັດການຮຽນຮູ້ມີຄ່າສະເລ່ຍເທົ່າກັບ 17.42 ແລະ ເມື່ອປຽບທຽບຜົນການທົດສອບກ່ອນ ແລະ ຫຼັງການຈັດການຮຽນຮູ້ພົບວ່ານັກຮຽນມີການພັດທະນາທັກສະການອ່ານພາສາອັງກິດເພື່ອຄວາມເຂົ້າໃຈຮ່ວມກັບການໃຊ້ເທັກນິກການສອນແບບ Think-pair-share ສູງກວ່າເກນທີ່ຕັ້ງໄວ້ຮ້ອຍລະ 75 ຢ່າງມີໄນສໍາຄັນທາງສະຖິຕິທີ່ລະດັບ 0.05

ຜົນການຄົ້ນຄວ້າລະດັບຄວາມເພິ່ງພໍໃຈຂອງນັກຮຽນຕໍ່ວິທີສອນແບບ think-pair-share ແມ່ນຢູ່ໃນລະດັບເພິງພໍໃຈຫຼາຍທີ່ສຸດໂດຍມີ ( $\overline{X}$ = 4.62 and S.D= 0.03) ເຊິ່ງສູງກວ່າສົມມຸດຕິຖານທີ່ຕັ້ງໄວ້ ທັງນີ້ຍ້ອນວ່າວິທີສອນທີ່ຊ່ວຍໃຫ້ນັກຮຽນໄດ້ຄົ້ນຄິດໂດຍອາໄສຄວາມຮູ້ເດີມທີ່ມີປະສົມກັບຄວາມຮູ້ໃໝ່ແລ້ວສາມາດຄາດຄະເນຄໍາຕອບໄດ້ ນອກຈາກນີ້ນັກຮຽນໄດ້ແລກປ່ຽນຄໍາຕອບນໍາໝູ່ພາຍໃນກຸ່ມ, ເຮັດໃຫ້ການຮຽນມີສີສັນໜ້າສົນໃຈ ແລະ ງ່າຍຂຶ້ນ ມັນຊ່ວຍໃຫ້ນັກຮຽນມີທັກສະການຮຽນຮ່ວມກັນ ແລະ ການສື່ສານທີ່ດີເຮັດໃຫ້ນັກຮຽນມີຄວາມໝັ້ນໃຈໃນຄໍາຕອບຂອງຕົນເຊິ່ງ Baroody (1993) ໄດ້ກ່າວເຖິງຜົນປະໂຫຍດທີ່ສໍາຄັນຂອງການຮຽນຮູ້ແບບThink-pair-share ດັ່ງນີ້: ການຮຽນຮູ້ແບບຮ່ວມມືສົ່ງເສີມການຮຽນຮູ້ຂອງເນື້ອຫາໄດ້ດີ, ການຮຽນຮູ້ແບບຮ່ວມມືສົ່ງເສີມຄວາມສາມາດໃນການແກ້ໄຂບັນຫາ ແລະ ການສົມເຫດສົມຜົນ ແນວທາງການພັດທະນາທັກສະການແກ້ໄຂບັນຫາ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນກຸ່ມຂອງຫມູ່ເພື່ອນໃນ 3 ທາງແມ່ນການສົນທະນາຮ່ວມກັນເປັນກຸ່ມນ້ອຍເຮັດໃຫ້ນັກຮຽນສາມາດແກ້ໄຂບັນຫາກັບຄົນອື່ນໃນໃຈໄດ້, ຊ່ວຍໃຫ້ຄູເຂົ້າໃຈບັນຫາຂອງແຕ່ລະຄົນໃນກຸ່ມ. ເພາະຄວາມຮູ້ພື້ນຖານຂອງແຕ່ລະຄົນແຕກຕ່າງກັນ, ນັກຮຽນເຂົ້າໃຈການແກ້ໄຂບັນຫາຈາກການເຮັດວຽກເປັນກຸ່ມ, ການຮຽນຮູ້ແບບຮ່ວມມືສົ່ງເສີມຄວາມຫມັ້ນໃຈຕົນເອງ ແລະ ການຮຽນຮູ້ແບບຮ່ວມມືສົ່ງເສີມທັກສະທາງສັງຄົມ ແລະ ທັກສະການສື່ສານ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Khotyota, (2023) ເລື່ອງການຈັດການຮຽນຮູ້ໂດຍໃຊ້ແບບຝຶກການອ່ານແຈກລູກສະກົດຄໍາມາດຕາແມ່ກົນຮ່ວມກັບການຮຽນຮູ້ແບບຮ່ວມມືເທັກນິກ think-pair-share ສໍາລັບນັກຮຽນຊັ້ນປະຖົມປີທີ 1 ພົບວ່າ ລະດັບຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດ *($\bar{x}$ = 4.67).* ແລະ ສອດຄ່ອງກັບບົດວິໄຈຂອງ Soulivongxay, (2023). ເລື່ອງການຈັດກິດຈະກໍາການຮຽນ-ການສອນອ່ານຈັບໃຈຄວາມເລື່ອງ the boat recing festival ດ້ວຍວິທີສອນແບບ think-pair-share ຂັ້ນ ມ.3. ພົບວ່າ ນັກຮຽນມີຄວາມເພິງພໍໃຈຕໍ່ແມ່ນຢູ່ໃນລະດັບເພິງພໍໃຈຫຼາຍທີ່ສຸດດ້ວຍຄ່າ( $\overline{X}$=4,58 and S.D=0,55)

## 6. ສະຫຼຸບຜົນ

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ 1*)* ປຽບທຽບຜົນການຮຽນຂອງນັກຮຽນດ້ານທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈກ່ອນຮຽນ ແລະ ຫຼັງຮຽນ ຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈ ໂດຍໃຊ້ວິທີສອນແບບ think-

pair-share ຮ່ວມກັບການໃຊ້ຄຳຖາມ ແລະ 2) ສຶກສາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ນັກຮຽນມັດທະຍົມສຶກສາຊັ້ນ ມ.4 ໂຮງຮຽນມັດທະຍົມສົມບູນສາທິດ ພາກຮຽນທີ 1 ສົກຮຽນ 2024-2025 ຈຳນວນ 21 ຄົນ, ຍິງ 13 ຄົນ ໂດຍການເລືອກແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ ແຜນການຈັດການຮຽນຮູ້ແບບ think-pair-share ຮ່ວມກັບການໃຊ້ຄຳຖາມ, ແບບທົດສອບວັດຜົນສຳເລັດທາງການຮຽນຂອງນັກຮຽນ, ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບສົມມຸດຕິຖານດ້ວຍ dependent t-test .

1. ຜົນການທົດສອບຫຼັງການຮຽນຂອງນັກຮຽນມີຄ່າ (Mean= 24.69, S.D= 2.70) ຖ້າທຽບໃສ່ເກນແມ່ນຢູ່ໃນລະດັບດີ ແລະ ກ່ອນຮຽນແມ່ນມີຄ່າ (Mean= 9.50, S.D= 1.35) ຖ້າທຽບໃສ່ເກນແມ່ນຢູ່ໃນລະດັບບໍ່ຜ່ານ. ສະນັ້ນເຫັນວ່າຄະແນນກ່ອນຮຽນ ແລະ ຫຼັງຮຽນມີຄວາມແຕກຕ່າງກັນ, ຈຶ່ງເວົ້າໄດ້ວ່າຜົນການຮຽນຂອງນັກຮຽນຕໍ່ການພັດທະນາທັກສະການອ່ານພາສາຝຣັ່ງເພື່ອຄວາມເຂົ້າໃຈໂດຍໃຊ້ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມ ຂອງນັກຮຽນ ຫຼັງຮຽນແມ່ນສູງກວ່າກ່ອນຮຽນຢ່າງມີນະຍະສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

2. ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ວິທີສອນແບບ think-pair-share ຮ່ວມກັບການໃຊ້ຄຳຖາມແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍທີ່ສຸດໂດຍມີ ( $\overline{X}$ = 4.62 & SD= 0.03) ເຊິ່ງສູງກວ່າສົມມຸດຕິຖານທີ່ຕັ້ງໄວ້.

## 7. ຂໍ້ສະເໜີແນະ

1. ການສອນອ່ານທີ່ໃຊ້ວິທີສອນແບບ think-pair-share ເລື່ອງທີ່ເອົາມາສອນຕ້ອງໜ້າສົນໃຈ ແລະ ເໝາະກັບລະດັບຂອງນັກຮຽນ

2. ການສອນອ່ານທີ່ໃຊ້ວິທີສອນແບບ think-pair-share ຖ້ານັກຮຽນແມ່ນລະດັບເລີ່ມຕົ້ນໃຫ້ເລີ່ມສອນຄຳສັບໃຫ້ນັກຮຽນຮູ້ກ່ອນຈຶ່ງໃຫ້ອ່ານບົດເລື່ອງ

3. ການສອນອ່ານທີ່ໃຊ້ວິທີສອນແບບ think-pair-share ຖ້ານັກຮຽນມີຈຳນວນໜ້ອຍໃຫ້ຈັດເປັນຄູ່, ໃນກໍລະນີທີ່ມີນັກຮຽນຫຼາຍສາມາດຈັດເປັນກຸ່ມໄດ້

4. ຢາກໃຫ້ນຳໃຊ້ວິທີສອນແບບ think-pair-share ໄປນຳໃຊ້ກັບວິຊາອື່ນໆ

5. ຢາກໃຫ້ນຳໃຊ້ວິທີສອນແບບ think-pair-share ໄປປະສານຮ່ວມກັບວິທີສອນອື່ນໆ

## 8. ເອກະສານອ້າງອີງ


Baroody, A. J. (1993). The development of informal counting, number, and arithmetic skills and concepts. In R. J.

Best, J. W. (1986). *Research in education* (5th ed.). Englewood Cliffs, NJ: Prentice-Hall.

Bresson, F. (1983). *The development of reading in children* [Le développement de la lecture chez l'enfant]. Paris: Presses Universitaires de France.

Fisher, R. A. (1925). *Statistical methods for research workers*. Edinburgh: Oliver and Boyd.

Hatsady, S. (2022). Learning and teaching French reading for main ideas by using KWL-PLUS technique for year 2 French students, 12+4 system at Luang Prabang Teacher Training College. *Souphanouvong University Journal of Multidisciplinary Research and Development*, 8(1), 136–143. ISSN 2521-0653.

International Organization of La Francophonie (OIF). (2022). *The French Language in the World*.

Jensen (Ed.), *Teaching mathematics in early childhood* (pp. 117–183). Washington, DC: National Education Association.

Jindakul, J. (2022). *The development of English reading comprehension ability by using exercises based on the Murdoch Integrated Approach (MIA) for students in grade 11, Watcharawittaya School, Kamphaeng Phet* (M.Ed. independent study, Naresuan University).

Krashen, S. D. (2004). *The Power of Reading: Insights from the Research*. Libraries Unlimited.

Khotyota, T. (2023). *Study on the results of learning management on word reading of the Mae Kon spelling group using practical exercises and the cooperative learning technique Think-Pair-Share among first-grade students. Journal for Developing the Social and Community*. Available on Thai Journal Online (ThaiJo2.1).

Lyman, F. T. (1981). *The responsive classroom discussion: The inclusion of all students*. In A. Anderson (Ed.), Mainstreaming Digest (pp. 109–113). College Park, MD: University of Maryland Press.

Nuttall, C. E. (1996). *Teaching reading skills in a foreign language* (2nd ed.). Oxford: Heinemann.

Nitko, A. J., & Brookhart, S. M. (2014). *Educational assessment of students* (7th ed.). Boston, MA: Pearson.

Prombud, R. (2021). *The development of reading comprehension ability for Grade 7 students by using Think-Pair-Share techniques and questions* [Master's thesis, Silpakorn University]. Silpakorn University Repository.

Sisombath, S. (2021). *Improving third year English students' translation of text genres by using the method of comparing the position of words in phrases or sentences in the text genres*. *Souphanouvong University Journal of Multidisciplinary Research and Development, 7*(2), 239–248.

Soulivongxay, C. (2023). *Organizing the boat racing festival with a Think-Pair-Share teaching method for Grade 3 at Song Horn High School, Saiyabuly Province* (Undergraduate graduation report). Luang Prabang Teacher Training College, Laos.

Walsh, J. A., & Sattes, B. D. (2017). *Questioning for Classroom Discussion: Purposeful Speaking, Engaged Listening, Deep Thinking.* ASCD.